Washington State Department of Social & Health Services
Transforming lives

# ໃບຕົກລົງສັນຍາຂອງການຍິນຍອມເຣື່ອງການຫມົດສິດ

## ສຳລັບໂຄງການຊ່ວຍເຫລືອອາຫານຂອງຣັດວໍຊິງຕັນ

## Disqualification Consent Agreement

| ເລກ OFA | ຊື່ຂອງຜູ້ຮັບ | ເລກ SSN ຂອງຜູ້ຮັບ | ວັນເກີດຂອງຜູ້ຮັບ | ເລກ IDຂອງຜູ້ຮັບ |
|---|---|---|---|---|
| | | | | |

ຂ້າພະເຈົ້າ,________________________________________, ເຂົ້າໃຈວ່າ:
ຊື່, ຊື່ກາງ, ນາມສະກຸນ

**ຖ້າຫາກວ່າບຸກຄົນຜູ້ທີ່ຖືກກ່າວຫາບໍ່ແມ່ນຫົວຫນ້າຄອບຄົວ, ຫົວຫນ້າຄອບຄົວຍັງຈະຕ້ອງເຊັນຊື່ໃສ່ໃບຕົກລົງສັນຍາຂອງການຍິນຍອມເຣື່ອງການຫມົດສິດ ຕາມທີ່ຖືກກ່າວໄວ້ຢູ່ໃນກົດຫມາຍ 7 CFR 273.16(h)(l)(ii)(A).**

ຂ້າພະເຈົ້າ,________________________________________, ເຂົ້າໃຈວ່າ:
ຊື່, ຊື່ກາງ, ນາມສະກຸນຂອງຫົວຫນ້າຄອບຄົວ

1. ສະມາຊິກຄອບຄົວຜູ້ໃຫຍ່ທີ່ຍັງເຫລືອຢູ່ທຸກໆຄົນຂອງຫນ່ວຍຊ່ວຍເຫລືອອາຫານຂອງຂ້າພະເຈົ້າແລະຂ້າພະເຈົ້າຮັບຜິດຊອບສຳລັບການຈ່າຍຄືນຂອງການຫວງເອົາທີ່ເປັນຜົນອອກມາ,ນອກຈາກວ່າສະມາຊິກຄອບຄົວໄດ້ຈ່າຍການງວງເອົາຄືນແລ້ວຊຶ່ງເປັນຜົນອອກມາຂອງການປະຕິບັດຕາມເງື່ອນໄຂຂອງໃບຕົກລົງສັນຍາ.
2. ຂ້າພະເຈົ້າບໍ່ໄດ້ຖືກພົບວ່າກະທຳຜິດໃນການສະເນີໃຫເຫັນ ຫລື ການສໍ€ໂກງທາງກົດຫມາຍແພ່ງ ຫລື ກົດຫມາຍອາຄຍາ. ເຖິງຢ່າງໃດກໍຕາມ, ເມື່ອຂ້າພະເຈົ້າເຊັນຊື່ໃສ່ໃບຕົກລົງສັນຍາໃບນີ້,ຂ້າພະເຈົ້າຈະບໍ່ໄດ້ຮັບການຊ່ວຍເຫລືອອາຫານສຳລັບຂ້າພະເຈົ້າເອງ ແລະ ຫນ່ວຍຮັບການຊ່ວຍເຫລືອຂອງຂ້າພະເຈົ້າຈະໄດ້ຮັບການຊ່ວຍເຫລືອອາຫານເປັນຈຳນວນຕ່ຳກວ່າເມື່ອຂ້າພະເຈົ້າຖືກຕັດສິດ.
3. ເມື່ອຂ້າພະເຈົ້າເຊັນຊື່ໃສ່ໃບຕົກລົງສັນຍາຂອງການຍິນຍອມເຣື່ອງການຫມົດສິດໃບນີ້,ຂ້າພະເຈົ້າເຂົ້າໃຈວ່າຂ້າພະເຈົ້າຈະຖືກຕັດສິດເປັນເວລາ:

☐ 12 ເດືອນ ☐ 24 ເດືອນ ☐ ສິບ (10) ປີ ☐ ຢ່າງຖາວອນ

ອັນນີ້ເປັນຂອງຂ້າພະເຈົ້າ: ☐ ການລ່ວງລະເມີດທຳອິດ; ☐ ການລ່ວງລະເມີດທີສອງ; ☐ ການລ່ວງລະເມີດທີສາມ; ຫລື

☐ ຂ້າພະເຈົ້າໄດ້ຮັບການຊ່ວຍເຫລືອອາຫານຊ້ຳກັນຈາກຫ້ອງການ ຫລື ຣັດຫລາຍກວ່າບ່ອນນຶ່ງ.

### ການອະທິບາຍຂອງສິດທິຕາມຣັດຖະທັມມະນູນຂອງທ່ານ

ກ່ອນທີ່ທ່ານຈະຖືກສອບຖາມ, ທ່ານຈະຖືກແຈ້ງບອກກ່ຽວກັບສິດທິຂອງທ່ານ, ດັ່ງຕໍ່ລົງໄປນີ້:

1. ທ່ານມີສິດທີ່ຈະມິດຢູ່;
2. ທຸກໆຢ່າງທີ່ທ່ານເວົ້າອອກມາຈະຖືກໃຊ້ໃສ່ທ່ານຢູ່ໃນສານແຫ່ງກົດຫມາຍ;
3. ທ່ານມີສິດຢູ່ໃນເວລານີ້ທີ່ຈະມີທະນາຍຄວາມຊຶ່ງທ່ານເລືອກເອົາເອງ ແລະ ໃຫ້ເຂົາເຈົ້າມາປາກົດຕົວກ່ອນ ແລະ ໃນຣະຫວ່າງການສອບຖາມ ຫລື ການໃຫ້ຄຳແຈ້ງການແນວໃດແນວນຶ່ງ;
4. ຖ້າຫາກວ່າທ່ານບໍ່ສາມາດຈ່າຍຄ່າທະນາຍຄວາມໄດ້, ທ່ານມີສິດທີ່ຈະໄດ້ຄົນນຶ່ງຖືກແຕ່ງຕັ້ງໃຫ້ທ່ານໄດ້ໂດຍສານໂດຍບໍ່ຄິດຄ່າແນວໃດນຳທ່ານ ແລະ ທີ່ຈະໃຫ້ເຂົາເຈົ້າມາປາກົດຕົວກ່ອນ ແລະ ໃນຣະຫວ່າງການສອບຖາມ ຫລື ການໃຫ້ຄຳແຈ້ງການແນວໃດແນວນຶ່ງ;
5. ທ່ານມີສິດທີ່ຈະໃຊ້ສິດທິຂ້າງເທິງນີ້ແນວໃດແນວນຶ່ງໄດ້ໃນທຸກໆເວລາກ່ອນ ແລະ ໃນຣະຫວ່າງການສອບຖາມ ຫລື ການໃຫ້ຄຳແຈ້ງການແນວໃດແນວນຶ່ງ.

### ຄຳເຕືອນເຣື່ອງການປັບໃຫມລົງໂທດຂອງໂຄງການຊ່ວຍເຫລືອອາຫານ

**ພາຍໃຕ້ກົດຫມາຍ WAC 388-446-0020, ບຸກຄົນຈະບໍ່ໄດ້ຮັບການຊ່ວຍເຫລືອອາຫານເປັນເວລາ:**

**ນຶ່ງປີ** ສຳລັບການລ່ວງລະເມີດໂດຍຮູ້ຈັກດີໃນກົດຣະບຽບຂອງການຊ່ວຍເຫລືອອາຫານ ຫລື ໂຄງການຊ່ວຍເຫລືອອາຫານການກິນເພີ້ມເຕີມ (SNAP);

**ສອງປີ** ສຳລັບການລ່ວງລະເມີດດັ່ງນັ້ນເທື່ອທີສອງ; ຫລື ການຕັດສິນລົງໂທດເທື່ອທຳອິດສຳລັບການຊື້, ການຂາຍ, ຫລື ການແລກປ່ຽນການຊ່ວຍເຫລືອອາຫານ ຫລື ການຊ່ວຍເຫລືອ SNAP ສຳລັບຫາດຢາເສພຕິດ;

**ສິບປີ** ສຳລັບການເອົາຣາຍຣະອຽດໃຫ້ໂດຍຮູ້ຈັກດີກ່ຽວກັບບັດປະຈຳຕົວ ຫລື ບ່ອນຢູ່ທີ່ບໍ່ຖືກຕ້ອງ ເພື່ອຈະໄດ້ຮັບການຊ່ວຍເຫລືອອາຫານຊ້ຳກັນ;

**ຕະລອດຊີວິດ** ສຳລັບ:
ການລ່ວງລະເມີດຮູ້ຈັກດີໃນກົດຣະບຽບຂອງການຊ່ວຍເຫລືອອາຫານຫລື ການຊ່ວຍເຫລືອ SNAP ເທື່ອທີສາມ;
ການຕັດສິນລົງໂທດເທື່ອທີສອງສຳລັບການຊື້, ການຂາຍ, ຫລື ການແລກປ່ຽນການຊ່ວຍເຫລືອອາຫານສຳລັບຫາດຢາເສພຕິດ;
ການຕັດສິນລົງໂທດສຳລັບການຊື້, ການຂາຍ, ຫລື ການແລກປ່ຽນການຊ່ວຍເຫລືອອາຫານສຳລັບປືນ, ກະສຸນ, ຫລື ຣະເບີດ; ຫລື
ການຕັດສິນລົງໂທດສຳລັບການຊື້, ການຂາຍ, ຫລື ການແລກປ່ຽນການຊ່ວຍເຫລືອອາຫານທີ່ມີມູນຄ່າ $500 ຫລື ຫລາຍກວ່າ.

**ບຸກຄົນຜູ້ທີ່ລ່ວງລະເມີດໂດຍຮູ້ຈັກດີ ແລະ ໂດຍເຈຕະນາໃນກົດຣະບຽບຂອງການຊ່ວຍເຫລືອອາຫານສາມາດຖືກຕັດສິນລົງໂທດ ແລະ ຖືກປັບໃຫມຮອດ $250,000 ຫລື ຂັງຄຸກຮອດຊາວປີ ຫລື ທັງສອງຢ່າງ. ເຂົາເຈົ້າຍັງຈະຖືກຕັດສິນລົງໂທດອີກຄືກັນພາຍໃຕ້ກົດຫມາຍຂອງຣັດຖະບານກາງອື່ນໆທີ່ກ່ຽວຂ້ອງນຳ.**

| ລາຍເຊັນຂອງບຸກຄົນຜູ້ທີ່ຫມົດສິດ | ວັນທີ | ລາຍເຊັນຂອງຫົວຫນ້າຄອບຄົວ<br>(ຖ້າຫາກວ່າຜູ້ທີ່ຖືກກ່າວຫາບໍ່ແມ່ນຫົວຫນ້າຄອບຄົວ) | ວັນທີ |
|---|---|---|---|
| | | | |